**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະໂຄສະນາອົບຮົມສູນກາງພັກ

ສຳນັກຂ່າວສານປະເທດລາວ ເລກທີ:………. /ຂປລ

ນະຄອນຫຼວງວຽງຈັນ, ວັນທີ ມີນາ 2026

# ບົດສະຫຼຸບ ການເຄື່ອນໄຫວວຽກງານ ປະຈຳເດືອນ ມີນາ ແລະ ທິດທາງແຜນການວຽກງານເດືອນ ເມສາ ປີ 2026

- ອີງຕາມ ພາລະບົດບາດ ຂອງສຳນັກຂ່າວສານປະເທດລາວ ສະບັບເລກທີ 975/ຖວທ, ລົງວັນທີ 03 ທັນວາ 2020.

## I. ສະພາບລວມ:

### ກ. ດ້ານດີ:

**1. ດ້ານແນວຄິດການເມືອງ**

ໃນໄລຍະໜຶ່ງເດືອນຜ່ານມາ, ຄະນະນຳ ສຳນັກຂ່າວສານປະເທດລາວ ໄດ້ຍົກສູງບົດບາດການນຳພາ ທາງດ້ານແນວຄິດ-ການເມືອງ, ໃຫ້ພະນັກງານ-ລັດຖະກອນຢ່າງເປັນປົກກະຕິ, ມີແນວຄິດອຸ່ນອ່ຽນໜຸ່ນທ່ຽງ, ຫ້າວຫັນຕັ້ງໜ້າປະຕິບັດໜ້າທີ່ວິຊາສະເພາະຢ່າງມີຜົນສຳເລັດ, ໃນສຳນັກມີຄວາມສະຫງົບໂດຍພື້ນຖານ ແລະ ຮັກສາໄດ້ຄວາມສາມັກຄີພາຍໃນເປັນຢ່າງດີ.

**2. ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ**

ຕະຫຼອດ 1 ເດືອນຜ່ານມາພະນັກງານ-ລັດຖະກອນ ສຳນັກຂ່າວສານປະເທດລາວ ໄດ້ເອົາໃຈໃສ່ໃນການປະຕິບັດໜ້າທີ່ວິຊາສະເພາະ ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ ດັ່ງນີ້:

**2.1 ວຽກບໍລິຫານ:**

- **ໜັງສືສະເໜີ**: ຂໍອະນຸມັດຈັດພິມໂປສະເຕີຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສະໄໝທີ XII ; ຂໍອະນມັດພະນັກງານໄປເຄື່ອນໄຫວເຂົ້າຮ່ວມກິດຈະກຳ ສະເໜຢຸນນານ-ການແລກປ່ຽນມິດຕະພາບຊາວລາວ-ຈີນ ທີ່ແຂວງຢຸນນານ ສປ ຈີນ ໃນ ວັນທີ 22-31 ມີນາ 2026, ຂໍຄຳເຫັນກວດແກ້ປຶ້ມເນື້ອໃນ50 ປີ ສປປ ລາວ ແລະ ປຶ້ມປະມວນຮູບພາບ 50 ປີ ສປປ ລາວ;
- ໜັງສືແຈ້ງຕອບ ເລື່ອງ ແຈ້ງລາຍຊື່ພະນັກງານເຂົ້າຮ່ວມຝຶກອົບຮົມການນຳໃຊ້ລະບົບຖານຂໍ້ມູນບໍລິຫານເງິນ (ພາກລັດ ໂປແກຼມບັນຊີ); ລາຍຊື່ພະນັກງານ ຂປລ ເປັນພາສາອັງກິດສົ່ງ ກົມຂໍ້ມູນຂ່າວສານ ຄອສພ.
- **ບົດສະຫຼຸບ**: ຂ່າວປະຈຳອາທິດສົ່ງກົມສື່ມວນຊົນ, ການເຄື່ອນໄຫວວຽກງານປະຈຳເດືອນ ກຸມພາ ແລະ ທິດແຜນການວຽກງານ ເດືອນ ກຸມພາ ປີ2026 ສົ່ງໃຫ້ຄະນະໂຄສະນາອົບຮົມສູນກາງພັກ.

- ສັງລວມແຜນລາຍຈ່າຍ-ລາຍຮັບວິຊາການ ຂອງສຳນັກຂ່າວສານປະເທດລາວ ປະຈຳປີ2026.
- ແຜນດັດແກ້ງົບປະມານລາຍຮັບວິຊາການ 6 ເດືອນທ້າຍ ປີ 2026.
- **ເຕັກນິກສ້ອມແປງ:** ສ້ອມແປງຈັກໄຟຟ້າສຳຮອງທໍ່ນໍ້າມັນແຕກ, ແປງຄອມ.

**2.2 ວຽກໂຄສະນາ .**

ໄດ້ຕິດຕາມ ແລະ ໂຄສະນາໃຫ້ແກ່ການເຄື່ອນໄຫວ ແລະ ເຫດການສຳຄັນຕ່າງໆ, ຕິດຕາມການເຄື່ອນໄຫວ ຂອງບັນດາການນຳພັກ-ລັດ ທັງພາຍໃນ ແລະ ຕ່າງປະເທດ; ມູນເຊື້ອຂອງປະທານໄກສອນ ພົມວິຫານ; ຄອສພ ປາຖະກະຖາວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 70 ປີ; ກະກຽມຄວາມພ້ອມເປັນເຈົ້າພາບກອງປະຊຸມທົບສົນທິສັນຍາການເກືອດຫ້າມລູກຫວ່ານ ຮອບທີ3; ລາຍງານຜົນການເຄື່ອນໄຫວຊຸກຍູ້ວຽກງານໂຄສະນາປຸກລະດົມຂະບວນການເລືອກຕັ້ງຢູ່ສູນກາງ - ທ້ອງຖິ່ນ; ພ້ອມກັນໄປໃຊ້ສິດເລືອກຕັ້ງ ສຊຊ ແລະ ສສຂ ໃຫ້ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້; ການນຳຂັ້ນສູງພັກ-ລັດ ອະດີດການນຳຂັ້ນສູງ ແລະ ປະຊາຊົນບັນດາເຜົ່າໃຊ້ສິດເລືອກຕັ້ງເອົາສສຊ ຊຸດທີ X ແລະ ສສຂ ຊຸດທີ V ຢ່າງເປັນບວນຟົດຟື້ນ; ແຈ້ງຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ປປ ລາວ ຕໍ່ການນຳພັກລັດກອມມູນິດຫວຽດນາມ; ສອງປະທານປະເທດ ລາວ - ຫວຽດນາມ ພົບປະສອງຝ່າຍ ຮັດ ແ ໜ້ນການຮ່ວມມື; ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນເດືອນກຸມພາ; ລັດຖະບານ ຈະສູ້ຊົນສະ ເ ໜີມໍລະດົກວັດທະນະທຳຫຼາຍປະເພດເຂົ້າເປັນມໍລະດົກໂລກ; ຜົນສຳເລັດກອງປະຊຸມຄົບຄະນະ ຄັ້ງທີ2 ຂອງນະບໍລິຫານງານສູນກາງພັກ ສະໄໝທີ XII; ນາຍົກລັດຖະມົນຕີ ຕ້ອນຮັບເລຂາທິການໃຫຍ່ອົງການຝຣັ່ງໂກໂຟນີສາກົນ; ຮອງນາຍົກລັດຖະມົນຕີ ເຂົ້າຮ່ວມພິທີເປີດນຳໃຊ້ສະໜາມບິນສາກົນບໍ່ແກ້ວ; ສປປ ລາວ ສະຫຼອງວັນແມ່ຍິງສາກົນຄົບຮອບ 116 ປີ; ຄະນະຜູ້ແທນສະມາຄົມມິດພາບ ລາວ-ມຽນມາ ເຄື່ອນໄຫວເຮັດວຽກຢູ່ມຽນມາ; ຜັນຂະຫຍາຍຜົນສຳເລັດກອງປະຊຸມໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ ສະໄໝທີ XII; ກອງປະຊຸມຄົບຄະນະຄົບຄະນະບໍລິຫານງານ ສະໄໝທີXII ຄັ້ງທີ2; ຜົນສຳເລັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີX ແລະ ສະມາຊິກສະພາປະຊາຊົນແຂວງຊຸດທີV; ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ; ຜັນຂະຫຍາຍທິດຊີ້ນຳການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ(ສອຈ); ລາວ-ຈີນ ຫາລືແລກປ່ຽນການສົ່ງເສີມການລົງທຶນ; ເປີດມະຫະກຳໜັງສື ແລະ ວັດທະນະທຳນານາຊາດ ຄັ້ງທີ VI; ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຮ່ວມກັນປຶກສາຫາລືແກ້ໄຂບັນຫານໍ້າມັນເຊື້ອໄຟລາວ; ເປີດໂຄງການ ສຽງປະສານແຫ່ງມໍລະດົກລາວ; ການສະເດັດມາຢ້ຽມຢາມ ລັດຖະກິດ ຢູ່ສປປ ລາວ ຂອງພະບາດສົມເດັດ ພຣະອະຊິຣະເກົ້າເຈົ້າຢູ່ຫົວ ແລະ ສົມເດັດພະນາງເຈົ້າ ພຣະບໍຣົມລາຊິນີ ແຫ່ງ ລາຊະອານາຈັກໄທ ໃນວັນທີ16-18ມີນາ 2026; ສະພາບການເໜັງຕີງຂອງລາຄານໍ້າມັນເຊື້ອໄຟພາຍໃນປະເທດໃນສະພາບເຄັ່ງຮ້ອນ; ສະພາບດິນຟ້າອາກາດ; ເຫດການສຳຄັນອື່ນໆທັງສູນກາງ ແລະ ທ້ອງຖິ່ນ ແລະ ຕິດຕາມນຳພາທາງສຽງສັງຄົມຕ່າງໆຜ່ານສື່ອອນລາຍ.

- **ຕາຕະລາງສັງລວມຕົວເລກຜົນງານການໂຄສະນາ:**

| ລາຍການຕ່າງໆ | ຈຳນວນ | ຜູ້ຕິດຕາມ | ຜູ້ເຂົ້າຊົມ | ຈັດໜ້າ |
|---|---|---|---|---|
| ຂຽນ ແລະ ບັນນາທິການຂ່າວ | 565 | | | |
| ຂຽນ ແລະ ບັນນາທິການບົດ | 145 | | | |
| ຖ່າຍຮູບ ແລະ ສຳເນົາ | 911 | | | |

| | | | | |
|---|---|---|---|---|
| ຂ່າວພາສາອັງກິດ | 305 | | | |
| ຂ່າວຄົ້ນຄວ້າ | 219 | | | |
| ເຜີຍແຜ່ຂ່າວໃນເຟສບຸກປະເທດລາວ pathadlao | 554 | 2,415,455 | | |
| ເຜີແຜ່ຂ່າວເຟສບຸກຮູບພາບປະເທດລາວ | 299 | 71.991 | | |
| ເຜີຍແຜ່ຂໍ້ມູນໃນເວັບໄຊ www.kpl. gov.la | 330 | 138,959 | 34,202 | |
| ຜະລິດ ແລະ ເຜີຍແຜ່ ຄລິບວີດີໂອຜ່ານເຟສບຸກປະເທດລາວ pathadlao ແລະ ຢູ່ທູບ | 44 | 25,390 | | |
| ສົ່ງຂ່າວທາງໂທລະສັບມືຖື(SMS)ຮ່ວມກັບລາວໂທລະຄົມ | 120 | | | |
| ເຜີຍແຜ່ໜັງສືພິມຜ່ານເວັບໄຊ ແລະເຟສບຸກ | 20 | | | 120 |
| ອອກແບບ- ຈັດໜ້າຕົ້ນສະບັບໜັງສືພປະເທດລາວ ລາຍວັນ | 20 | | | 120 |

2.3 **ວຽກຊີ້ນຳ -ນຳພາ**

- ໄດ້ນຳພາ-ຊີ້ນຳ ພະນັກງານ-ລັດຖະກອນເອົາໃຈໃສ່ຢ່າງເຂັ້ມງວດຕໍ່ການປະຕິບັດລະບຽບຂອງສຳນັກ, ກົດໝາຍຂອງລັດ, ເອົາໃຈໃສ່ນຳພາປະຊຸມສ່ອງແສງປະຈຳອາທິດ, ປະຈຳເດືອນ ກັບບັນດາພະແນກໃນສຳນັກ, ມີການຕິດຕາມກວດກາ, ລາຍງານ ແລະ ຈັດຕັ້ງຜັນຂະຫຍາຍບັນດາມະຕິ, ຄຳສັ່ງ ແລະ ຂໍ້ກຳນົດຕ່າງໆຂອງພັກ-ລັດຢ່າງເປັນປົກກະຕິ, ສືບຕໍ່ປັບປຸງ ບັນດາພະແນກທີ່ໄດ້ໂຮມເຂົ້າກັນ.

2.4 **ວຽກງານການເຄື່ອນໄຫວ**

- ຄະນະອຳນວຍການ ແລະ ພະນັກງານ ໄດ້ເຂົ້າຮ່ວມກອງປະຊຸມເຜີຍແຜ່ ແລະ ເຊື່ອມຊຶມມະຕິກອງປະໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ຄະນະໂຄສະນາອົບຮົມສູນກາງພັກ,ເຂົ້າຮ່ວມປະຖະກະຖາປະຫວັດຄວາມເປັນມາ ວັນແມ່ຍິງສາກົນ ຄົບຮອບ 116 ປີ ຢູ່ ຄອສພ, ແລະ ເຂົ້າຮ່ວມຂະບວນການກິດຈະກຳເຕະບານກັບບັນດາສື່ທີ່ຂຶ້ນກັບ ຄອສພ.
- ໄດ້ຊີ້ນຳຊຸກຍູ້ໜ່ວຍສະຫະພັນແມ່ຍິງ ກຳມະບານ ແລະ ຊາວໜຸ່ມ ເປັນເຈົ້າການປະຕິບັດຕາມພາລະບົດບາດຂອງຕົນຢ່າງເຕັມສ່ວນ, ບັນດາອົງການຈັດຕັ້ງມະຫາຊົນ ໄດ້ເປັນແມ່ແຮງໃນການຂັບເຄື່ອນວຽກງານວິຊາເພາະໄດ້ເປັນຢ່າງດີ.
- ໄດ້ນຳພາບັນດາອົງການຈັດຕັ້ງມະຫາຊົນ ສ້າງຂະບວນການ ກິດຈະກິດອອກແຮງງານ ພາຍໃນສຳນັກຂ່າວສານປະເທດເພື່ອຕ້ອນຮັບວັນແມ່ຍິງສາກົນ ຄົບຮອບ 116 ປີ.

**ຂ. ຂໍ້ຄົງຄ້າງ**

- ການປະຕິບັດຕາມໂມງເວລາ ຂອງພະນັກງານ-ລັດຖະກອນຈຳນວນໜຶ່ງຍັງບໍ່ທັນໄດ້ດີເທົ່າທີ່.

## II. ທິດທາງແຜນການວຽກງານ ເດືອນ ເມສາ ປີ 2026.

### 1. ດ້ານແນວຄິດ.

- ສືບຕໍ່ນຳພາ-ຊີ້ນຳ ທາງດ້ານແນວຄິດ-ການເມືອງ, ໃຫ້ພະນັກງານ-ລັດຖະກອນ ໃຫ້ມີແນວຄິດອຸ່ນອ່ຽນ ທຸ່ນທ່ຽງ, ຫ້າວຫັນຕັ້ງໜ້າປະຕິບັດໜ້າທີ່ວິຊາສະເພາະ ຢ່າງມີຜົນສຳເລັດ.

### 2. ດ້ານວິຊາສະເພາະ.

- ສືບຕໍ່ປະຕິບັດໜ້າວຽກງານວິຊາເພາະຕາມ ພາລະບົດບາດ ແລະ ຂັ້ນເທິງມອບໝາຍ.
- ສຸມໃສ່ນຳພາ-ຊີ້ນຳ ການປະຕິບັດວຽກງານວິຊາສະເພາະ ການເຄື່ອນໄຫວເກັບກຳຂ່າວ, ການຂຽນບົດຂຽນຂ່າວ, ບັນທຶກຮູບພາບ ໃຫ້ທັນກັບສະພາບການ ແລະ ມີຄວາມຮັບປະກັນທາງດ້ານເນື້ອໃນ.
- ສືບຕໍ່ປຶ້ມປະມວນພາບ 50 ປີ ສປປ ລາວ.
- ສືບຕໍ່ການສ້າງປຶ້ມ 50 ປີ ສປປ ລາວ.

### 3. ທິດທາງໂຄສະນາ:

ສືບຕໍ່ໂຄສະນາຕິດຕາມການເຄື່ອນໄຫວ ຂອງບັນດາການນຳພັກ-ລັດ ທັງພາຍໃນ ແລະ ຕ່າງປະເທດ; ຜັນຂະຫຍາຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ; ການຜັນຂະຫຍາຍທິດຊີ້ນຳການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ(ສອຈ); ມູນເຊື້ອຂອງປະທານໄກສອນ ພົມວິຫານ; ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ ; ໂຄສະນາຜົນສຳເລັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີV; ໂຄສະນາກອງປະຊຸມຄັ້ງປະຖົມມະລືກ ຂອງສະພາແຫ່ງຊາດ ຊຸດທີ X;ວັນສ້າງຕັ້ງຊາວໜຸ່ມປະຕິວັດລາວ ຄົບຮອບ 71 ປີ; ວັນສ້າງຕັ້ງກະຊວງປ້ອງກັນຄວາມຫງົບ; ບຸນປີໃໝ່ລາວ; ສະພາບການເໜັງຕີງຂອງລາຄານ້ຳມັນເຊື້ອໄຟພາຍໃນປະເທດໃນສະພາບເຄັ່ງຮ້ອນ; ການຜະລິດລະດູແລ້ງ; ສະພາບດິນຟ້າອາກາດ; ການທ່ອງທ່ຽວ; ສະພາບພົ້ນເດັ່ນພາກພື້ນ ແລະ ສາກົນ; ວັນສ້າງຕັ້ງສາຍພົວພັນການທູດ; ວັນຊາດບັນດາປະເທດເພື່ອນມິດ, ຕິດຕາມນຳພາທາງສຽງສັງຄົມຕ່າງໆຜ່ານສື່ອອນລາຍ.

**ຜູ້ອຳນວຍການໃຫຍ່**